ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**********

ກະຊວງການເງິນ

ກົມພາສີ

01581

ເລກທີ.............../ກພສ

ນະຄອນຫຼວງວຽງຈັນ, ວັນທີ..29 MAR 2018.

# ແຈ້ງການແນະນຳ

ເຖິງ: - ກອງຄຸ້ມຄອງພາສີ ທົ່ວປະເທດ

- ດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ
- ບັນດາຜູ້ປະກອບການທີ່ນຳເຂົ້າ-ສົ່ງອອກ ນ້ຳມັນເຊື້ອໄຟ, ພາຫະນະ, ເຫຼົ້າ, ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຢາສູບ

ເລື່ອງ: ການແຈ້ງພາສີເປັນລາຍລະອຽດສຳລັບການນຳເຂົ້ານ້ຳ-ສົ່ງອອກສິນຄ້າປະເພດ ນ້ຳມັນເຊື້ອໄຟ, ພາຫະນະ, ເຫຼົ້າ, ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຢາສູບ

- ອີງຕາມ ກົດໝາຍວ່າດ້ວຍພາສີ ເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງ ເລກທີ 057/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ບົດແນະນຳກະຊວງການເງິນ ເລກທີ 1559/ກງ, 24 ພຶດສະພາ 2016 ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍພາສີ;
- ອີງຕາມ ບົດແນະນຳຂອງກົມພາສີ ເລກທີ 00097/ກພສ, ລົງວັນທີ 06 ມັງກອນ 2017 ກ່ຽວກັບການແຈ້ງພາສີເປັນລາຍລະອຽດດ້ວຍລະບົບເອເລັກໂຕຣນິກ.

ໃນໄລຍະຜ່ານມາກົມພາສີສັງເກດເຫັນວ່າ ບັນດາຜູ້ປະກອບການນຳເຂົ້າ-ສົ່ງອອກສິນຄ້າປະເພດນ້ຳມັນເຊື້ອໄຟ, ພາຫະນະ, ເຫຼົ້າ, ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຢາສູບ ໄດ້ເຄື່ອນໄຫວຈັດຕັ້ງປະຕິບັດຕາມລະບຽບກົດໝາຍ. ເຖິງແນວໃດກໍ່ຕາມ, ສິນຄ້າປະເພດດັ່ງກ່າວ ເປັນສິນຄ້າປະເພດລັດຄວບຄຸມ ແລະ ກະທົບໄວຕໍ່ເສດຖະກິດ-ສັງຄົມ. ສະນັ້ນ, ເພື່ອເພີ່ມທະວີການຄຸ້ມຄອງກວດກາການນຳເຂົ້າ-ສົ່ງອອກສິນຄ້າດັ່ງກ່າວໃຫ້ຮັດກຸມ ແລະ ຮັບປະກັນການຈັດຕັ້ງປະຕິບັດລະບຽບກົດໝາຍຢ່າງຖືກຕ້ອງ,

**ກົມພາສີ ອອກແຈ້ງການແນະນຳ ດັ່ງນີ້:**

1. ການນຳເຂົ້າ-ສົ່ງອອກສິນຄ້າປະເພດນ້ຳມັນເຊື້ອໄຟ, ພາຫະນະ, ເຫຼົ້າ, ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຢາສູບ ຕ້ອງໄດ້ດຳເນີນການແຈ້ງພາສີເປັນລາຍລະອຽດທີ່ດ່ານພາສີບ່ອນນຳເຂົ້າ ໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍພາສີ ມາດຕາ 14 ແລະ ມາດຕາ 15, ຕ້ອງຮັບອະນຸຍາດຈາກຂະແໜງການກ່ຽວຂ້ອງກ່ອນການນຳເຂົ້າ-ສົ່ງອອກ ແລະ ຕ້ອງມີສັນຍາຊື້-ຂາຍ ຈຶ່ງສາມາດປະກອບໃບແຈ້ງພາສີເປັນລາຍລະອຽດໄດ້.
2. ກໍລະນີທີ່ບຸກຄົນ ຫຼື ນິຕິບຸກຄົນ ທີ່ເປັນເຈົ້າຂອງສິນຄ້າ ມອບໝາຍໃຫ້ຜູ້ອື່ນ ແຈ້ງພາສີແທນຕົນ ເຊັ່ນ:
   ກ. ການນຳເຂົ້າພາຫະນະ ຂອງສະຖານທູດ, ອົງການຈັດຕັ້ງລັດ, ອົງການຈັດຕັ້ງສາກົນ ແລະ ໂຄງການລົງທຶນຕ່າງໆ;

ຂ. ການນຳເຂົ້ານ້ຳມັນເຊື້ອໄຟ ທີ່ບໍລິສັດນ້ຳມັນເຊື້ອໄຟ ນຳເຂົ້າມາໃຫ້ໂຄງການລົງທຶນຕ່າງໆ ແລະ ອົງການຈັດຕັ້ງຕ່າງໆ;

ໃນກໍລະນີຂ້າງເທິງນີ້, ການປະຕິບັດໃບແຈ້ງພາສີເປັນລາຍລະອຽດຈະຕ້ອງຄັດຕິດ ສັນຍາບໍລິການແຈ້ງພາສີ ລະຫວ່າງເຈົ້າຂອງສິນຄ້າ ແລະ ຜູ້ນຳເຂົ້າທີ່ ເຮັດໜ້າທີ່ບໍລິການແຈ້ງພາສີ. ສັນຍາດັ່ງກ່າວຕ້ອງນຳໄປຈົດທະບຽນ ນຳຂະແໜງການລັດທີ່ກ່ຽວຂ້ອງ. ຮູບແບບເນື້ອໃນຂອງສັນຍາ ຕ້ອງສອດຄ່ອງກັບຮູບແບບທີ່ລັດຖະການພາສີ ກຳນົດໃນເອກະສານຊ້ອນທ້າຍຂອງແຈ້ງການສະບັບນີ້.

ໃນການປະກອບຂໍ້ມູນລົງໃນໃບແຈ້ງພາສີ, ຫ້ອງທີ 8 ຕ້ອງລະບຸຊື່ເຈົ້າຂອງສິນຄ້າ (ສະຖານທູດ, ອົງການຈັດ ຕັ້ງຕ່າງໆ ຫຼື ເຈົ້າຂອງໂຄງການ), ຫ້ອງທີ 14 ຕ້ອງລະບຸຊື່ຜູ້ນຳເຂົ້າ (ຜູ້ແຈ້ງພາສີ) ແລະ ຫ້ອງທີ 54 ແມ່ນຜູ້ແຈ້ງພາສີເປັນຜູ້ເຊັນຢັ້ງຢືນ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຮັກສາການຫົວໜ້າກົມພາສີ**

ກະຊວງ ການເງິນ
ກົມພາສີ

ບຸນປະເສີດ ສີກຸນລະບຸດ

**ບ່ອນສົ່ງ:**

- ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ "ເພື່ອລາຍງານ"